ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ຄະນະຈັດຕັ້ງສູນກາງພັກ

ເລກທີ 28 /ຄຈສພ

ນະຄອນຫຼວງວຽງຈັນ, ວັນທີ 14 ກຸມພາ 2025

# ຄໍາແນະນໍາ

# ກ່ຽວກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ

- ອີງຕາມ ຄໍາສັ່ງ ຂອງກົມການເມືອງສູນກາງພັກ ສະບັບເລກທີ 01/ກມສພ, ລົງວັນທີ 3 ມັງກອນ 2018 ວ່າດ້ວຍການເພີ່ມທະວີການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ;

- ອີງຕາມ ການຈັດຕັ້ງປະຕິບັດວຽກງານການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງການຈັດຕັ້ງຮາກຖານພັກ ໃນຂອບເຂດທົ່ວປະເທດ ໄລຍະຜ່ານມາ;

ເພື່ອເຮັດໃຫ້ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ດໍາເນີນໄປຢ່າງເປັນລະບົບ, ຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ຮັບປະກັນຄຸນນະພາບ, ຄະນະຈັດຕັ້ງສູນກາງພັກ ຈຶ່ງອອກຄໍາແນະນໍາ ດັ່ງນີ້:

## I. ຈຸດປະສົງ ຄາດໝາຍ.

- ເພື່ອເຮັດໃຫ້ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ດໍາເນີນໄປຢ່າງຖືກຕ້ອງເປັນເອກະພາບໃນທົ່ວພັກ ຮັບປະກັນໃຫ້ມີການນໍາພາ-ຊີ້ນໍາຢ່າງໃກ້ຊິດ ຈາກຄະນະພັກແຕ່ລະຂັ້ນ, ມີຄະນະຮັບຜິດຊອບ, ມີກົນໄກປະສານງານລະອຽດ ລະຫວ່າງ ຄະນະພັກຂັ້ນເທິງ, ຄະນະຮັບຜິດຊອບ ແລະ ບັນດາການຈັດຕັ້ງຮາກຖານພັກ;

- ກໍານົດບັນດາເນື້ອໃນ, ຂັ້ນຕອນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເພື່ອໃຫ້ບັນດາໜ່ວຍພັກກໍາແໜ້ນ, ຮູ້ນໍາພາສ້າງແຜນການ, ຈັດຕັ້ງປະຕິບັດແຜນການ, ສະຫຼຸບຕີລາຄາ ແລະ ຮັບປະກັນໃນການຕີລາຄາແບ່ງປະເພດຂອງສະມາຊິກພັກ, ໜ່ວຍພັກ ຖືກຕ້ອງກັບຄວາມເປັນຈິງ;

- ເພື່ອສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງທາງດ້ານທັດສະນະ ແລະ ວິທີການຕີລາຄາການຈັດຕັ້ງພັກ, ສະມາຊິກພັກ ທີ່ຖືເອົາຄຸນນະພາບເປັນກົກ, ເອົາສະພາບການຕົວຈິງ ແລະ ຜົນສໍາເລັດຕົວຈິງເປັນໄມ້ຫຼາວັດແທກຕາມມາດຕະຖານທີ່ກໍານົດໄວ້ໃນຄໍາແນະນໍາສະບັບນີ້.

## II. ເນື້ອໃນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

### ກ. ມາດຕະຖານການກໍ່ສ້າງສະມາຊິກພັກ.

ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ໜ່ວຍພັກຕ້ອງນໍາພາສ້າງໃຫ້ສະມາຊິກພັກແຕ່ລະສະຫາຍພາຍໃນໜ່ວຍບັນລຸໄດ້ຕາມມາດຕະຖານທີ່ໄດ້ກໍານົດໄວ້ໃນກົດລະບຽບພັກ ໂດຍລົງເລິກແຕ່ລະດ້ານ ດັ່ງລຸ່ມນີ້:

#### 1. ດ້ານຄຸນທາດການເມືອງ.

- ສະມາຊິກພັກ ຕ້ອງເປັນເຈົ້າການຄົ້ນຄວ້າ, ເຊື່ອມຊຶມ, ກໍາແໜ້ນແນວທາງ, ມະຕິ, ຄໍາສັ່ງຂອງພັກໃຫ້ມີຄວາມຮັບຮູ້, ເຂົ້າໃຈຈະແຈ້ງ ແລະ ປະກອບສ່ວນບູລະນະແນວທາງ, ແຜນນະໂຍບາຍ, ມະຕິ, ຄໍາສັ່ງ, ກົດລະບຽບພັກ, ລັດຖະທໍາມະນູນ, ກົດໝາຍຂອງລັດ;

- ຕັ້ງໜ້າຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ມີທັດສະນະຫຼັກໝັ້ນຊົນຊັ້ນ, ຫຼັກໝັ້ນມິດ-ສັດຕູຢ່າງຈະແຈ້ງ, ຍຶດໝັ້ນອຸດົມການສັງຄົມນິຍົມ, ມີຄວາມຕື່ນຕົວເປັນເຈົ້າການ, ບຸກບືນ, ອົດທົນ, ຜ່ານຜ່າຄວາມຫຍຸ້ງຍາກ, ເສຍສະຫຼະ ເພື່ອຜົນປະໂຫຍດລວມຂອງຊາດ, ຂອງປະຊາຊົນ ເພື່ອຄວາມຢູ່ດີ, ກິນດີຂອງປະຊາຊົນ

ແລະ ຄວາມຈະເລີນກ້າວໜ້າຂອງປະເທດຊາດ, ເດັດດ່ຽວປົກປັກຮັກສາລະບອບປະຊາທິປະໄຕປະຊາຊົນ ແລະ ຫ້າວຫັນປະຕິບັດໜ້າທີ່ການເມືອງດ້ວຍຄວາມຮັບຜິດຊອບສູງ;

- ຕັ້ງໜ້າຮໍ່າຮຽນຍົກລະດັບຕົນເອງ ໃຫ້ມີຄວາມຮູ້ກ່ຽວກັບທິດສະດີມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ; ເປັນຜູ້ຮັບຮູ້, ກໍາແໜ້ນ, ເຊື່ອມຊຶມແນວທາງ, ແຜນນະໂຍບາຍຂອງພັກ, ມີຄວາມສາມາດຜັນຂະຫຍາຍເຂົ້າໃນການປະຕິບັດໜ້າທີ່ຂອງຕົນ ແລະ ຂອງໜ່ວຍພັກ;

- ມີຄວາມເປັນເອກະພາບ ຕໍ່ແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກ, ເປັນເຈົ້າການປົກປ້ອງແນວທາງ, ອຸດົມການຂອງພັກ, ຕອບຕ້ານຖ້ອຍທໍານອງໂຄສະນາບິດເບືອນ, ໃສ່ຮ້າຍປ້າຍສີ, ທັບຖົມແນວທາງນະໂຍບາຍຂອງພັກ ແລະ ປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນພາຍໃນພັກ ແລະ ສັງຄົມ;

- ມີຄວາມສາມັກຄີເປັນເອກະພາບພາຍໃນພັກ ບົນພື້ນຖານຫຼັກການ ແລະ ແນວທາງຂອງພັກ, ຕ້ານແນວຄິດອັດຕະວິໄສ, ຫຼາຍພັກ, ຫຼາຍເຄົ້າ, ຈຸ້ມເຈື້ອພັກພວກ, ກຸ່ມກ້ອນ; ຕ້ານພະຍາດອາດຍາສິດ, ເອກະຊົນ, ແນວຄິດສວຍໂອກາດສໍ້ລາດບັງຫຼວງ, ສວຍໃຊ້ໜ້າທີ່, ຕໍາແໜ່ງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວທີ່ບໍ່ຖືກຕ້ອງຕາມລະບຽບ, ກົດໝາຍ.

**2. ດ້ານຄຸນສົມບັດສິນທໍາປະຕິວັດ.**

- ສະມາຊິກພັກຕ້ອງຮໍ່າຮຽນ, ກໍາແໜ້ນມູນເຊື້ອຂອງພັກ, ຂອງຊາດ; ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ ທາງດ້ານຄຸນສົມບັດສິນທໍາປະຕິວັດ, ມີນໍ້າໃຈຮັກຊາດ, ຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດໃຈ, ມີຄວາມກະຕັນຍູ, ຮູ້ບຸນຄຸນຕໍ່ໝາກຜົນການປະຕິວັດ; ດໍາລົງຊີວິດດ້ວຍຄວາມຊື່ສັດ, ປອດໃສ, ດຸໝັ່ນ, ອົດທົນ, ປະຢັດ; ມີຄວາມສຸພາບຮຽບຮ້ອຍ, ເຮັດແທ້ທໍາຈິງ; ຮັກສາໄດ້ຄວາມເປັນແບບຢ່າງນໍາໜ້າທີ່ດີໃຫ້ແກ່ມະຫາຊົນ;

- ປະຕິບັດໜ້າທີ່ວຽກງານດ້ວຍຄວາມຮັບຜິດຊອບສູງ, ສູ້ຊົນເຮັດຫຼ້ອນໜ້າທີ່ ໂດຍບໍ່ຮຽກຮ້ອງ, ເລັ່ງທວງເອົາຜົນປະໂຫຍດມາໃຫ້ຕົນເອງ, ມີນໍ້າໃຈເສຍສະຫຼະ, ສຸມທຸກສະຕິປັນຍາ, ກໍາລັງວັງຊາຂອງຕົນ ເພື່ອພາລະກິດປະຕິວັດຂອງພັກ, ຂອງຊາດ; ມີຄວາມກ້າຫານ, ເດັດດ່ຽວ ຕໍ່ສູ້ຕ້ານພະຍາດອາດຍາສິດ, ຕ້ານທຸກພຶດຕິກໍາທີ່ເປັນການສໍ້ລາດບັງຫຼວງ, ປະກົດການຫຍໍ້ທໍ້ຕ່າງໆ ພາຍໃນພັກ ແລະ ທົ່ວສັງຄົມ; ມີຄວາມສາມັກຄີເອື້ອເຟື້ອເພື່ອແຜ່, ບໍ່ອະຄະຕິບຽດບຽນຄົນອື່ນ, ບໍ່ອວດອົ່ງທະນົງຕົວ, ມີທັດສະນະມະຫາຊົນ ແລະ ທັດສະນະແຮງງານຖືກຕ້ອງ, ຈິງໃຈຕິຊົມຕົນເອງ ແລະ ຕິຊົມເພື່ອນສະຫາຍ; ມີຄວາມບຸກບືນຮໍ່າຮຽນ ແລະ ພັດທະນາຕົນເອງຢູ່ເລື້ອຍໆ.

**3. ດ້ານສະຕິຕໍ່ການຈັດຕັ້ງ ແລະ ລະບຽບວິໄນ.**

- ສະມາຊິກພັກ ຕ້ອງມີສະຕິຕໍ່ການຈັດຕັ້ງ, ເຄົາລົບ ແລະ ປະຕິບັດກົດລະບຽບພັກ, ສິດ, ໜ້າທີ່ ແລະ ຂໍ້ຫ້າມຂອງສະມາຊິກພັກ, ກົດໝາຍຂອງລັດ, ລະບຽບການຂອງສໍານັກງານ-ອົງການ ແລະ ທ້ອງຖິ່ນຕົນຢ່າງເຂັ້ມງວດ; ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບຕໍ່ໜ້າທີ່ ທີ່ໄດ້ຮັບມອບໝາຍ; ບໍ່ກອບໂກຍ, ບໍ່ສວຍໂອກາດສໍ້ລາດບັງຫຼວງ, ຮູ້ກວດກາຕົນເອງເປັນປະຈໍາ ແລະ ຈິງໃຈແກ້ໄຂຈຸດອ່ອນຂອງຕົນເອງ;

- ເດັດດ່ຽວຍຶດໝັ້ນໃນຫຼັກການຈັດຕັ້ງ ແລະ ລະບຽບວິໄນຂອງພັກ; ຮູ້ຮັກສາຄວາມສາມັກຄີເປັນເອກະພາບ, ກ້າຕໍ່ສູ້ຕ້ານສິ່ງຫຍໍ້ທໍ້ຕ່າງໆພາຍໃນພັກ, ໃນສັງຄົມ; ເຂົ້າຮ່ວມດໍາເນີນຊີວິດໜ່ວຍພັກ, ເສຍເງິນສະຕິພັກເປັນປົກກະຕິ ແລະ ປະຕິບັດລະບອບຕິຊົມຕົນເອງ, ຕິຊົມເຊິ່ງກັນ ແລະ ກັນຢ່າງຕັ້ງໜ້າ;

- ເຄົາລົບ ແລະ ປະຕິບັດຕາມການຕົກລົງຂອງການຈັດຕັ້ງ, ບໍ່ເລືອກວຽກ, ບໍ່ມີແນວຄິດປຽບທຽບ, ຊັ່ງຊາ; ຕ້ານແນວຄິດເມີນເສີຍ, ອຶດອາດ, ຊັກຊ້າ, ຂາດລະບຽບວິໄນ;

- ປະກອບສ່ວນກໍ່ສ້າງໜ່ວຍພັກ, ສະມາຊິກພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ; ກ້າຫານຕໍ່ສູ້, ບໍ່ຈົ່ງຈຽມ, ບໍ່ປະນີປະນອມ ຕໍ່ຜູ້ລະເມີດລະບຽບ, ກົດໝາຍ; ປະກອບສ່ວນໃນວຽກງານຂະຫຍາຍພັກ, ການຄຸ້ມຄອງສະມາຊິກພັກໃຫ້ຮັບປະກັນຄຸນນະພາບ.

4. ດ້ານແບບແຜນນຳພາ ແລະ ວິທີເຮັດວຽກ.

- ກຳແໜ້ນ ແລະ ຍຶດໝັ້ນແບບແຜນນຳພາ ແລະ ວິທີເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ, ເສີມຂະຫຍາຍປະຊາທິປະໄຕພາຍໃນການຈັດຕັ້ງ ແລະ ໝູ່ຄະນະ ບົນພື້ນຖານແນວທາງ, ມະຕິ, ຄຳສັ່ງ ແລະ ກົດລະບຽບພັກ;

- ຮູ້ແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ສະມາຊິກພັກ; ຮູ້ປະສານສົມທົບ ລະຫວ່າງ ນຳພາລວມສູນກັບການເສີມຂະຫຍາຍຄວາມຮັບຜິດຊອບ ແລະ ລັກສະນະເປັນເຈົ້າການປະດິດສ້າງຂອງບຸກຄົນ, ຮູ້ປະສານສົມທົບຂັ້ນເທິງ, ຂັ້ນລຸ່ມ, ສາຍຕັ້ງ, ສາຍຂວາງ; ເຮັດວຽກມີແຜນການ, ແຜນງານ, ໂຄງການ, ມີການຊຸກຍູ້, ຕິດຕາມ, ກວດກາ; ຮູ້ສະຫຼຸບ, ລາຍງານສ່ອງແສງຂໍທິດຊີ້ນຳຈາກຂັ້ນເທິງ;

- ມີແບບແຜນເຮັດວຽກທີ່ຕິດພັນກັບຮາກຖານ, ຮູ້ຮັບຟັງ, ຮູ້ເລືອກເຟັ້ນຄຳຄິດຄຳເຫັນທີ່ຖືກຕ້ອງ ແລະ ມີເຫດຜົນຂອງມະຫາຊົນ ເພື່ອປັບປຸງຕົນເອງ, ປັບປຸງການຈັດຕັ້ງ; ຕ້ານແບບແຜນວິທີເຮັດວຽກອາດຍາສິດ, ຮູບການ, ຜິວເຜີນ, ມະລຸ່ມມະລ່ອຍ, ບໍ່ຮອບຄອບເລິກເຊິ່ງ.

5. ດ້ານຄວາມຮູ້-ຄວາມສາມາດ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ.

- ສະມາຊິກພັກ ຕ້ອງມີຄວາມຮູ້, ຄວາມສາມາດ, ມີລະດັບວິຊາສະເພາະໃດໜຶ່ງທີ່ແນ່ນອນສົມຄູ່ກັບໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ, ຮູ້ກົດໝາຍ ແລະ ພາສາຕ່າງປະເທດໃດໜຶ່ງ; ປະຕິບັດໜ້າທີ່ການເມືອງ ທີ່ໄດ້ຮັບມອບໝາຍ ເຮັດຖືກຕ້ອງຕາມທິດຊີ້ນຳຂອງພັກ, ຂອງລັດ; ມີຄວາມຊື່ສັດ, ຈົງຮັກພັກດີຕໍ່ອາຊີບ, ຕໍ່ວິຊາສະເພາະທີ່ຕົນຮັບຜິດຊອບ; ກຳແໜ້ນ ແລະ ປະຕິບັດນະໂຍບາຍການຕ່າງປະເທດຂອງພັກ-ລັດທີ່ວາງອອກ ໃຫ້ຖືກຕ້ອງ; ຮູ້ຄົ້ນຄວ້າ ແລະ ໝູນໃຊ້ບົດຮຽນພາຍໃນ ແລະ ຕ່າງປະເທດເຂົ້າໃນການປະຕິບັດໜ້າທີ່ການເມືອງ ທີ່ຕົນຮັບຜິດຊອບຢ່າງປະດິດສ້າງ;

- ເປັນເຈົ້າການຄົ້ນຄວ້າກຳແໜ້ນ, ເຊື່ອມຊຶມແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລະບຽບກົດໝາຍຂອງລັດ; ຕັ້ງໜ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດ້ວຍຄວາມບຸກບືນ, ຫ້າວຫັນ, ມີຄວາມຮັບຜິດຊອບສູງ ແລະ ມີຜົນສຳເລັດ;

- ມີຄວາມຮັບຜິດຊອບຕໍ່ຜົນໄດ້ຜົນເສຍໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍບໍ່ເອື່ອຍອີງ, ປະປ່ອຍຖິ້ມຄວາມຮັບຜິດຊອບໃສ່ຜູ້ອື່ນ, ຕ້ານແນວຄິດທະເຍີທະຍານ, ຂາດຄວາມຮັບຜິດຊອບ, ເຮັດວຽກພໍໃຫ້ແລ້ວ, ບໍ່ມີປະສິດທິຜົນ, ສະງັກສັກສ້າ, ບໍ່ກ້າຫານ, ບໍ່ມີຄວາມຕັດສິນໃຈສູ້ຊົນຜ່ານຜ່າອຸປະສັກ, ຄວາມຫຍຸ້ງຍາກນາໆປະການ; ບໍ່ງຶ່ງງຽງ, ບໍ່ຈົ່ມວ່າ, ບໍ່ທໍ້ຖອຍ ມີຄວາມບຸກບືນສູ້ຊົນເຮັດໃຫ້ວຽກງານທີ່ຕົນຮັບຜິດຊອບມີບາດກ້າວຂະຫຍາຍຕົວໃໝ່;

ບັນດາເນື້ອໃນ, ມາດຕະຖານທີ່ກ່າວມາຂ້າງເທິງ ແມ່ນເປັນພື້ນຖານໃຫ້ສະມາຊິກພັກໃນການຕີລາຄາຕົນເອງ ແລະ ຕີລາຄາ ເຊິ່ງກັນ ແລະ ກັນ.

**ຂ. ມາດຕະຖານການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.**

ຄະນະພັກທຸກຂັ້ນ ຕ້ອງສູ້ຊົນ, ນຳພາປັບປຸງກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ບັນລຸຕາມມາດຕະຖານດ້ານຕ່າງໆ ດັ່ງລຸ່ມນີ້:

1. ນຳພາດ້ານການເມືອງ.

- ໜ່ວຍພັກ ຕ້ອງຄົ້ນຄວ້າ, ກຳແໜ້ນ-ເຊື່ອມຊຶມ ແລະ ຈັດຕັ້ງເຜີຍແຜ່, ຮໍ່າຮຽນແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ, ກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດ ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ເຂົ້າໃຈຢ່າງເລິກເຊິ່ງ, ຮູ້ໄດ້ສິດ ແລະ ພັນທະຂອງຕົນ, ມີຄວາມຕື່ນຕົວເປັນເຈົ້າການ ບຸກບືນປະຕິບັດໃຫ້ເກີດຜົນຕົວຈິງ;

- ມີຄວາມສາມາດກຳແໜ້ນ ແລະ ຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ ແລະ ມະຕິ, ຄຳສັ່ງຂອງຄະນະພັກຂັ້ນເທິງ ມາເປັນທິດທາງ, ແຜນການສູ້ຊົນປະຕິບັດຂອງໜ່ວຍພັກ;

- ສ້າງເງື່ອນໄຂໃຫ້ສະມາຊິກພັກ, ພະນັກງານໄດ້ຮັບການບຳລຸງຍົກລະດັບທິດສະດີການເມືອງ; ເອົາໃຈໃສ່ອົບຮົມກໍ່ສ້າງສະມາຊິກພັກ, ພະນັກງານ, ຊາວໜຸ່ມ, ເຍົາວະຊົນ, ມະຫາຊົນໃຫ້ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ຮູ້ມິດ-ຮູ້ສັດຕູ; ສຳລັບສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ຕ້ອງມີຄຸນທາດການເມືອງໜັກແໜ້ນ, ຄຸນສົມບັດສິນທຳປະຕິວັດທີ່ຖືກຕ້ອງ, ມີຄວາມຈົງຮັກພັກດີຕໍ່ອຸດົມການຂອງພັກ, ມີນ້ຳໃຈເສຍສະຫຼະ; ຮັບໃຊ້ຊາດ, ຮັບໃຊ້ປະຊາຊົນດ້ວຍຄວາມບໍລິສຸດໃຈ, ສາມາດກາຍເປັນຜູ້ສືບທອດພາລະກິດປະຕິວັດຂອງພັກ.

**2. ນຳພາດ້ານແນວຄິດ.**

- ໜ່ວຍພັກ ຕ້ອງສຶກສາອົບຮົມການເມືອງ, ແນວຄິດໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ບັນລຸໄດ້ ດັ່ງນີ້:

+ ເຊື່ອມຊຶມກຳແໜ້ນ, ມີຄວາມເປັນເອກະພາບສູງຕໍ່ແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງ ແລະ ອຸດົມການຂອງພັກ; ເຄົາລົບ ແລະ ຕື່ນຕົວປະຕິບັດກົດໝາຍ, ລະບຽບການຂອງລັດ, ມີຄວາມຕື່ນຕົວຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ; ມີຄວາມເອກອ້າງທະນົງໃຈຕໍ່ໝາກຜົນຂອງການປະຕິວັດ, ມູນເຊື້ອຂອງພັກ, ຂອງຊາດ;

+ ຍຶດໝັ້ນຈຸດໝາຍສັງຄົມນິຍົມຢ່າງສະເໝີຕົ້ນສະເໝີປາຍ; ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆທີ່ເກີດຂຶ້ນ, ເດັດດ່ຽວຕໍ່ສູ້ຕ້ານທຸກກົນອຸບາຍມ້າງເພທຳລາຍຂອງສັດຕູ ແລະ ກຸ່ມຄົນບໍ່ດີ;

+ ເປັນເຈົ້າການປົກປ້ອງແນວທາງ, ອຸດົມການຂອງພັກ, ຕອບຕ້ານສິ່ງຫຍໍ້ທໍ້ຕ່າງໆທີ່ເກີດຂຶ້ນຢູ່ພາຍໃນໜ່ວຍພັກ ແລະ ໃນສັງຄົມ, ຕ້ານແນວຄິດສວຍໂອກາດ, ສວຍໃຊ້ໜ້າທີ່ຕຳແໜ່ງ, ພະຍາດອາດຍາສິດ, ເອກະຊົນ, ສໍ້ລາດບັງຫຼວງ, ຫຼິ້ນກິນຟຸມເຟືອຍ ແລະ ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ;

- ພາຍໃນຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງຮັກສາໄດ້ຄວາມສາມັກຄີເປັນເອກະພາບ ຢ່າງແໜ້ນແຟ້ນ, ບໍ່ມີແນວຄິດຫຼາຍພັກ, ຫຼາຍເຄົ້າ, ຈຸ້ມເຈື້ອພັກພວກ, ກຸ່ມກ້ອນ ຢູ່ພາຍໃນການຈັດຕັ້ງພັກ ແລະ ໃນຖັນແຖວພະນັກງານ, ສະມາຊິກພັກ.

**3. ນຳພາດ້ານການຈັດຕັ້ງ.**

- ຄະນະໜ່ວຍພັກ ແລະ ສະມາຊິກພັກພາຍໃນໜ່ວຍພັກ ຕ້ອງກຳແໜ້ນ ແລະ ປະຕິບັດຕາມກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດຢ່າງເຂັ້ມງວດ; ກຳແໜ້ນພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງໜ່ວຍພັກ; ມີຄວາມເປັນແບບຢ່າງນຳໜ້າໃນການເຄື່ອນໄຫວ ແລະ ການດຳລົງຊີວິດ, ບໍ່ມີປະກົດການຫຍໍ້ທໍ້ຢູ່ພາຍໃນພັກ ຫຼື ຖ້າມີກໍຕ້ອງເດັດຂາດແກ້ໄຂໃຫ້ທັນການ;

- ຍຶດໝັ້ນ ແລະ ປະຕິບັດຕາມ 5 ຫຼັກການ 3 ທິດນຳ ໃນການກໍ່ສ້າງ ແລະ ປັບປຸງພັກ; ປະຕິບັດລະບອບດຳເນີນຊີວິດໜ່ວຍພັກ ແລະ ເສຍເງິນສະຕິພັກ ເປັນປົກກະຕິ; ການດຳເນີນຊີວິດໜ່ວຍພັກ ຕ້ອງຮັບປະກັນ ແລະ ເສີມຂະຫຍາຍໄດ້ ລັກສະນະນຳພາ, ລັກສະນະສຶກສາອົບຮົມ ແລະ ລັກສະນະຕໍ່ສູ້;

- ຄຸ້ມຄອງ, ຕີລາຄາຄຸນນະພາບຂອງສະມາຊິກພັກ ແລະ ໜ່ວຍພັກເປັນປົກກະຕິ, ການຕີລາຄາຕ້ອງໃຫ້ຖືກກັບຄວາມຈິງ, ປະຕິບັດການຍ້ອງຍໍ, ສົ່ງເສີມສະມາຊິກພັກຜູ້ດີເດັ່ນ, ຜູ້ມີຄວາມສາມາດ, ດຸໝັ່ນປະດິດສ້າງ ພ້ອມທັງປະຕິບັດມາດຕະການສຶກສາອົບຮົມ ແລະ ວິໄນຕໍ່ຜູ້ລະເມີດກົດລະບຽບພັກ, ກົດໝາຍ ແລະ ລະບຽບການຂອງລັດ ຢ່າງເຂັ້ມງວດ; ບໍ່ປົກປິດເຊື່ອງອຳສິ່ງຫຍໍ້ທໍ້ທີ່ເກີດຂຶ້ນຢູ່ພາຍໃນການຈັດຕັ້ງພັກ-ລັດ ທີ່ຂຶ້ນກັບສິດຄຸ້ມຄອງຂອງຄະນະພັກຂັ້ນຕົນ;

- ເອົາໃຈໃສ່ບຳລຸງສ້າງມະຫາຊົນ, ປະຊາຊົນ, ຊາວໜຸ່ມ, ເຍົາວະຊົນ ໃຫ້ມີຄວາມຕື່ນຕົວທາງການເມືອງ, ມີນ້ຳໃຈຮັກຊາດ, ມີຄວາມມັກ, ຄວາມນິຍົມທີ່ຖືກຕ້ອງ, ມີຄວາມເອກອ້າງທະນົງໃຈຕໍ່ມູນເຊື້ອອັນດີງາມຂອງຊາດ, ມີຄວາມເດັດດ່ຽວໝຽວແໜ້ນ, ສູ້ຊົນຜ່ານຜ່າການທົດສອບໃນຂະບວນການວຽກງານຕົວຈິງ ເພື່ອຂະຫຍາຍເຂົ້າພັກ;

- ການຂະຫຍາຍພັກ ຕ້ອງຖືຄຸນນະພາບເປັນກົກ ໂດຍເລືອກເຟັ້ນເອົາມະຫາຊົນຜູ້ທີ່ບັນລຸໄດ້ຕາມມາດຕະຖານ,

ເງື່ອນໄຂຄົບຖ້ວນ ແລະ ຕ້ອງປະຕິບັດຕາມບາດກ້າວ, ຂັ້ນຕອນຂອງການຂະຫຍາຍພັກ ທີ່ໄດ້ກຳນົດໃນກົດລະບຽບພັກ ຢ່າງເຂັ້ມງວດ.

**4. ນຳພາດ້ານແບບແຜນການນຳພາ.**

- ໜ່ວຍພັກ ຕ້ອງຍຶດໝັ້ນແບບແຜນນຳພາ ແລະ ວິທີເຮັດວຽກ ຕາມຫຼັກການລວມສູນປະຊາທິປະໄຕ ຢ່າງເຂັ້ມງວດ, ມີການປະຊຸມປຶກສາຫາລື, ຄົ້ນຄວ້າຕົກລົງບັນຫາສຳຄັນເປັນໝູ່ຄະນະ, ມີການແບ່ງງານໃຫ້ບຸກຄົນຮັບຜິດຊອບຈະແຈ້ງ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ຂັ້ນລຸ່ມປະຕິບັດຕາມຂັ້ນເທິງ, ສົມທົບແໜ້ນ ລະຫວ່າງ ການນຳພາຂອງໝູ່ຄະນະກັບບຸກຄົນຮັບຜິດຊອບ ແລະ ລະບອບຫົວໜ້າ;

- ໜ່ວຍພັກເຮັດວຽກມີແຜນການ, ມີໂຄງການ, ມີການຊຸກຍູ້, ຕິດຕາມ, ກວດກາ ແລະ ສະຫຼຸບປະເມີນຜົນຕາມແຜນການທີ່ໄດ້ວາງໄວ້; ປະຕິບັດລະບອບປະຊຸມ ແລະ ລາຍງານສ່ອງແສງເປັນປົກກະຕິ;

- ຕິດຕາມ, ກວດກາການເຄື່ອນໄຫວຂອງສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ ເພື່ອເສີມຂະຫຍາຍດ້ານຕັ້ງໜ້າ ແລະ ແກ້ໄຂດ້ານອ່ອນຂໍ້ຄົງຄ້າງໃຫ້ທັນເວລາ;

- ປະສານສົມທົບຢ່າງກົມກຽວ ລະຫວ່າງ ການນຳພາຂອງພັກກັບການເຊີດຊູຄວາມສັກສິດຂອງອົງການບໍລິຫານລັດ, ອົງການປົກຄອງ ແລະ ເສີມຂະຫຍາຍບົດບາດຄວາມເປັນເຈົ້າ ຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຈັດຕັ້ງມະຫາຊົນ ທີ່ຢູ່ໃນຂອບເຂດນຳພາຂອງໜ່ວຍພັກ;

- ຍຶດໝັ້ນ ແລະ ເສີມຂະຫຍາຍແບບແຜນນຳພາ ທີ່ເປັນມູນເຊື້ອອັນດີງາມຂອງພັກ ເປັນຕົ້ນແບບແຜນນຳພາທີ່ຕິດແໜ້ນກັບມະຫາຊົນ, ຕິດແທດຮາກຖານ, ຕິດແທດກັບວຽກງານຕົວຈິງ, ມີປະຊາທິປະໄຕ, ມີການນຳພາລວມສູນເປັນເອກະພາບ, ເປັນເຈົ້າການຕ້ານພະຍາດອາດຍາສິດ, ເອກະຊົນ, ສໍ້ລາດບັງຫຼວງ ແລະ ແບບແຜນວິທີເຮັດວຽກແບບຜິວເຜີນ, ຮູບການ.

**5. ນຳພາປະຕິບັດໜ້າທີ່ການເມືອງ.**

- ໜ່ວຍພັກສຳນັກງານ-ອົງການ ນຳພາປະຕິບັດໜ້າທີ່ວິຊາສະເພາະ ຕ້ອງຮັບປະກັນໃຫ້ມີລະບອບ, ລະບຽບການເຄື່ອນໄຫວ, ມີການພົວພັນປະສານງານ, ຂັ້ນເທິງ, ຂັ້ນລຸ່ມ, ສາຍຕັ້ງ, ສາຍຂວາງ ທີ່ເປັນລະບົບຄົບຊຸດ, ບໍ່ມີຊ່ອງຫວ່າງ ທີ່ເປັນຜົນກະທົບເຖິງການຄຸ້ມຄອງເສດຖະກິດ-ສັງຄົມ ແລະ ພາໃຫ້ເກີດສິ່ງຫຍໍ້ທໍ້ໃນວຽກງານຂອງຂະແໜງການຕົນ; ການເຄື່ອນໄຫວປະຕິບັດໜ້າທີ່ ຕ້ອງມີຄວາມກ້າວໜ້າ, ມີຜົນງານດີເດັ່ນ, ປະດິດສ້າງໃໝ່, ສາມາດແກ້ໄຂດ້ານອ່ອນ-ຄົງຄ້າງຂອງວຽກງານ ໃຫ້ດີຂຶ້ນເລື້ອຍໆ; ນຳພາປັບປຸງບູລະນະອົງການບໍລິຫານລັດ ແລະ ບັນດາອົງການຈັດຕັ້ງມະຫາຊົນ ທີ່ຢູ່ໃນຂອບເຂດການນຳພາຂອງຕົນ ໃຫ້ເຄື່ອນໄຫວຕາມພາລະບົດບາດຂອງແຕ່ລະອົງການ, ສ້າງໃຫ້ອົງການເຫຼົ່ານັ້ນມີຄວາມເຂັ້ມແຂງເປັນກຳລັງແຮງໃຫ້ແກ່ໜ່ວຍພັກໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງ ໃຫ້ມີຜົນສຳເລັດ;

- ໜ່ວຍພັກລັດວິສາຫະກິດ, ວິສະຫະກິດເອກະຊົນ, ວິສະຫະກິດຮຸ້ນສ່ວນລັດກັບເອກະຊົນທັງພາຍໃນ ແລະ ຕ່າງປະເທດ ມີພາລະບົດບາດເປັນໃຈກາງພົວພັນປະສານງານ ລະຫວ່າງ ຜູ້ອຳນວຍການ, ສະພາບໍລິຫານ, ເຈົ້າຂອງວິສາຫະກິດກັບຊາວຜູ້ອອກແຮງງານ, ອຳນາດການປົກຄອງ, ການຈັດຕັ້ງການເມືອງ-ສັງຄົມທີ່ກ່ຽວຂ້ອງໃນການປົກປ້ອງຜົນປະໂຫຍດຂອງວິສາຫະກິດ ແລະ ຊາວຜູ້ອອກແຮງງານ ທັງເປັນຜູ້ໃຫ້ຄຳປຶກສາຊ່ວຍຜູ້ອຳນວຍການ, ເຈົ້າຂອງວິສາຫະກິດ ເພື່ອແກ້ໄຂບັນຫາຂໍ້ສະເໜີ ແລະ ປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນວິສາຫະກິດ ແນ່ໃສ່ເຮັດໃຫ້ວິສະຫະກິດດຳເນີນທຸລະກິດມີຜົນກຳໄລ ແລະ ປະຕິບັດພັນທະຕໍ່ລັດ ຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ກ່ຽວຂ້ອງກຳນົດໄວ້;

- ຄະນະພັກຮາກຖານກຸ່ມບ້ານ, ໜ່ວຍພັກບ້ານ ນຳພາອົງການປົກຄອງບ້ານ ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ວຽກງານຮອບດ້ານໃນຂອບເຂດຕົນຮັບຜິດຊອບໃຫ້ຖືກຕາມແນວທາງຂອງພັກ, ກົດໝາຍຂອງລັດ ນຳພາຊຸກຍູ້ປະຊາຊົນຜະລິດເປັນສິນຄ້າສະໜອງພາຍໃນ ແລະ ສົ່ງອອກ ເພື່ອແກ້ໄຂຄວາມທຸກຍາກ ທີ່ມີຢູ່ໃນບ້ານ

ໃຫ້ຫຼຸດລົງ, ສ້າງບ້ານໃຫ້ກາຍເປັນບ້ານພັດທະນາ, ບ້ານສາມັກຄີປອງດອງ; ບ້ານນັກຮົບເກົ່າ 3 ດີ 6 ຮັກສາ; ບ້ານແມ່ຍິງ 3 ດີ, ບ້ານຊາວໜຸ່ມ 4 ບຸກ, ບ້ານປ້ອງກັນຊາດເຂັ້ມແຂງ, ບ້ານປ້ອງກັນຄວາມສະຫງົບດີ; ບ້ານແບບຢ່າງປະຕິບັດກົດໝາຍ; ບ້ານປອດຢາເສບຕິດ; ບ້ານວັດທະນະທຳ ແລະ ບ້ານແບບຢ່າງສາທາລະນະສຸກ; ພະນັກງານ, ເຈົ້າໜ້າທີ່ຂອງບ້ານປະຕິບັດໜ້າທີ່ດ້ວຍຄວາມໂປ່ງໃສ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ.

ບັນດາເນື້ອໃນ, ມາດຕະຖານທີ່ກ່າວມາຂ້າງເທິງ ແມ່ນເປັນພື້ນຖານໃຫ້ການຈັດຕັ້ງພັກຂັ້ນຮາກຖານ ໂດຍສະເພາະແມ່ນ ຄະນະໜ່ວຍພັກ, ສະມາຊິກພັກ ເອົາເປັນບ່ອນອີງໃນການຕີລາຄາປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

## III. ການຕີລາຄາແບ່ງປະເພດສະມາຊິກພັກ, ໜ່ວຍພັກ ແລະ ການຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

**ກ. ເງື່ອນໄຂຕີລາຄາແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກ.**

**1. ເງື່ອນໄຂຕີລາຄາແບ່ງປະເພດສະມາຊິກພັກ.**

**1.1. ສະມາຊິກພັກທີ່ມີເງື່ອນໄຂຕີລາຄາແບ່ງປະເພດ.**

1). ສະມາຊິກພັກສົມບູນ ຕ້ອງໄດ້ເຂົ້າຮ່ວມດຳເນີນຊີວິດພັກ ເປັນປົກກະຕິ ແລະ ເຄື່ອນໄຫວປະຕິບັດໜ້າທີ່ການເມືອງຢູ່ໜ່ວຍພັກ ຢ່າງໜ້ອຍ 9 ເດືອນຂຶ້ນໄປ. ຍົກເວັ້ນສະມາຊິກພັກສົມບູນທີ່ເກີດລູກ, ຫຼຸລູກ, ປິ່ນປົວສຸຂະພາບ; ໄປຝຶກອົບຮົມ ຫຼື ບຳລຸງທິດສະດີການເມືອງ ແລະ ການປົກຄອງ ໄລຍະສັ້ນ ເຊິ່ງການຈັດຕັ້ງກ່ຽວຂ້ອງຕົກລົງແຕ່ເປົ້າໝາຍເຫຼົ່ານັ້ນ ຕ້ອງໄດ້ເຂົ້າຮ່ວມດຳເນີນຊີວິດພັກ ແລະ ເຄື່ອນໄຫວປະຕິບັດໜ້າທີ່ການເມືອງຢູ່ໜ່ວຍພັກບ່ອນຕີລາຄາ ຢ່າງໜ້ອຍ 6 ເດືອນ ຂຶ້ນໄປ;

2). ສະມາຊິກພັກສົມບູນ ທີ່ຍົກຍ້າຍໄປຮ່ວມຊີວິດພັກ ຢູ່ໜ່ວຍພັກອື່ນ ພາຍໃນອົງຄະນະພັກດຽວກັນ ແມ່ນໃຫ້ຕີລາຄາແບ່ງປະເພດ ຢູ່ໜ່ວຍພັກ ທີ່ຜູ້ກ່ຽວໄດ້ຮ່ວມຊີວິດພັກຫຼາຍກວ່າ;

3). ສະມາຊິກພັກສົມບູນ ທີ່ຍົກຍ້າຍໄປຢູ່ອົງຄະນະພັກອື່ນ ແມ່ນໃຫ້ຕີລາຄາແບ່ງປະເພດ ຢູ່ໜ່ວຍພັກໃໝ່ແຕ່ຕ້ອງໄດ້ຮັບການຢັ້ງຢືນຜົນງານຈາກອົງຄະນະພັກ, ໜ່ວຍພັກເກົ່າ;

4). ສະມາຊິກພັກບຳນານ ທີ່ໄດ້ສືບຕໍ່ປະຕິບັດໜ້າທີ່ການເມືອງ ແລະ ເຂົ້າຮ່ວມຊີວິດພັກ ຢູ່ສະຫະພັນນັກຮົບເກົ່າແຕ່ລະຂັ້ນ, ໜ່ວຍພັກບ້ານ, ໜ່ວຍພັກລັດວິສາຫະກິດທັງພາກລັດ ແລະ ເອກະຊົນ ແມ່ນໄດ້ຮັບການຕີລາຄາແບ່ງປະເພດຄືກັບສະມາຊິກພັກສົມບູນ ທີ່ປະຈຳການ.

**1.2. ສະມາຊິກພັກທີ່ບໍ່ມີເງື່ອນໄຂຕີລາຄາແບ່ງປະເພດ.**

1). ສະມາຊິກພັກບຳນານ ທີ່ບໍ່ໄດ້ສືບຕໍ່ປະຕິບັດໜ້າທີ່ການເມືອງ ແຕ່ຍັງໄດ້ຮ່ວມຊີວິດຢູ່ໜ່ວຍພັກສຳນັກງານ-ອົງການ, ບ້ານ; ແມ່ນບໍ່ໄດ້ຂຽນບົດສຳຫຼວດ, ບໍ່ໄດ້ຕີລາຄາແບ່ງປະເພດຕົນເອງ ແຕ່ມີສິດປະກອບຄຳເຫັນຕໍ່ການນຳພາລວມຂອງໜ່ວຍພັກ ແລະ ສະມາຊິກພັກ.

2). ສະມາຊິກພັກສຳຮອງ ແມ່ນໃຫ້ຂຽນໃບສຳຫຼວດ ແລະ ຜ່ານໃບສຳຫຼວດຕົນເອງ ຕໍ່ກອງປະຊຸມໜ່ວຍພັກ, ມີສິດປະກອບຄຳເຫັນຕໍ່ການນຳພາລວມຂອງໜ່ວຍພັກ ແລະ ສະມາຊິກພັກ, ແຕ່ບໍ່ມີສິດລົງຄະແນນສຽງ.

**2. ໜ່ວຍພັກທີ່ມີເງື່ອນໄຂຕີລາຄາແບ່ງປະເພດ.**

1) ໜ່ວຍພັກ ຕ້ອງໄດ້ຮັບການສ້າງຕັ້ງ ຢ່າງໜ້ອຍ 12 ເດືອນຂຶ້ນໄປ; ນຳພາໜ່ວຍພັກເຄື່ອນໄຫວຕາມສິດ, ໜ້າທີ່ ເຊິ່ງກຳນົດໃນກົດລະບຽບພັກ ແລະ ໄດ້ນຳພາການດຳເນີນຊີວິດໜ່ວຍພັກ ເປັນປົກກະຕິ;

2) ໜ່ວຍພັກ ຕ້ອງໄດ້ສ້າງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ; ແຜນການດັ່ງກ່າວຕ້ອງໄດ້ຜ່ານໃນກອງປະຊຸມໜ່ວຍພັກ ແລະ ຖືກຮັບຮອງຈາກຄະນະພັກຂັ້ນເທິງ;

3) ກອງປະຊຸມຕີລາຄາປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕ້ອງມີສະມາຊິກພັກສົມບູນເຂົ້າຮ່ວມຢ່າງໜ້ອຍ 2/3 ຂຶ້ນໄປ ຂອງຈຳນວນສະມາຊິກພັກສົມບູນທັງໝົດໃນໜ່ວຍພັກ.

**ຂ. ການຕີລາຄາໃຫ້ຄະແນນ, ແບ່ງປະເພດສະມາຊິກພັກ ແລະ ໜ່ວຍພັກ.**

**1. ການຕີລາຄາໃຫ້ຄະແນນ ແລະ ແບ່ງປະເພດສະມາຊິກພັກ.**

**1.1. ການຕີລາຄາໃຫ້ຄະແນນສະມາຊິກພັກ.**

ການຕີລາຄາໃຫ້ຄະແນນສະມາຊິກພັກ ແມ່ນອີງໃສ່ 5 ມາດຕະຖານ ທີ່ໄດ້ກຳນົດໄວ້ ໃນໂຣແມງ II ຂໍ້ ກ ຂອງ ຄຳແນະນຳສະບັບນີ້.

ການໃຫ້ຄະແນນແຕ່ລະດ້ານແມ່ນຈຳນວນຖ້ວນ 1-10 ຄະແນນ, ສຳລັບຄະແນນສະເລ່ຍໃນ 5 ດ້ານແມ່ນໃຫ້ຮັກສາຈຳນວນເສດຫຼັງຈຸດໄວ້ສອງຕົວເລກ ຕົວຢ່າງ: 8,01; 8,25; 8,51; ...

**1.2. ການແບ່ງປະເພດສະມາຊິກພັກ.**

ການແບ່ງປະເພດສະມາຊິກພັກ ແມ່ນອີງໃສ່ຄະແນນສະເລ່ຍ ຂອງ 5 ມາດຕະຖານ ປະກອບມີ 4 ປະເພດ ຄື:

| | | | |
|---|---|---|---|
| - ປະເພດແຂງ | ຄະແນນສະເລ່ຍ | 8-10 | ຄະແນນ |
| - ປະເພດກາງ | ຄະແນນສະເລ່ຍ | 6-7,99 | ຄະແນນ |
| - ປະເພດອ່ອນ | ຄະແນນສະເລ່ຍ | 4-5,99 | ຄະແນນ |
| - ປະເພດເສຍທາດ | ຄະແນນສະເລ່ຍແຕ່ | 3,99 | ຄະແນນ ລົງມາ |

**ຕົວຢ່າງ:** ສະຫາຍ ກ; 1. ດ້ານຄຸນທາດການເມືອງ 9 ຄະແນນ; 2. ດ້ານຄຸນສົມບັດສິນທຳປະຕິວັດ 8 ຄະແນນ; 3. ດ້ານສະຕິຕໍ່ການຈັດຕັ້ງ ແລະ ລະບຽບວິໄນ 8 ຄະແນນ; 4. ດ້ານແບບແຜນນຳພາ ແລະ ວິທີເຮັດວຽກ 9 ຄະແນນ; 5. ຄວາມຮູ້-ຄວາມສາມາດ ແລະ ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງ 8 ຄະແນນ; ຄະແນນລວມ 42 ຄະແນນ, ຄະແນນສະເລ່ຍ 8,40 ຄະແນນ, ຈັດປະເພດ: ແຂງ.

**2. ການຕີລາຄາໃຫ້ຄະແນນ ແລະ ແບ່ງປະເພດໜ່ວຍພັກ.**

**2.1. ການຕີລາຄາໃຫ້ຄະແນນໜ່ວຍພັກ.**

ການຕີລາຄາໃຫ້ຄະແນນໜ່ວຍພັກ ແມ່ນອີງໃສ່ 5 ມາດຕະຖານ ທີ່ໄດ້ກຳນົດໄວ້ ໃນໂຣແມງ II ຂໍ້ ຂ ຂອງ ຄຳແນະນຳສະບັບນີ້.

(ການໃຫ້ຄະແນນແຕ່ລະດ້ານແມ່ນຈຳນວນຖ້ວນ 1-10 ຄະແນນ)

**2.2. ການແບ່ງປະເພດໜ່ວຍພັກ.**

ການແບ່ງປະເພດໜ່ວຍພັກ ແມ່ນອີງໃສ່ຄະແນນສະເລ່ຍຂອງ 5 ມາດຕະຖານ ປະກອບມີ 3 ປະເພດ ຄື:

| | | | |
|---|---|---|---|
| - ປະເພດແຂງ | ຄະແນນສະເລ່ຍ | 8-10 | ຄະແນນ |
| - ປະເພດກາງ | ຄະແນນສະເລ່ຍ | 6-7,99 | ຄະແນນ |
| - ປະເພດອ່ອນ | ຄະແນນສະເລ່ຍ | 5,99 | ຄະແນນ ລົງມາ |

❖ ໜ່ວຍພັກ ທີ່ມີເງື່ອນໄຂຈັດຢູ່ໃນປະເພດແຂງ ຕ້ອງມີສະມາຊິກພັກຈັດຢູ່ໃນປະເພດແຂງກວມ 80% ຂຶ້ນໄປ ແລະ ບໍ່ມີສະມາຊິກພັກຈັດ ຢູ່ໃນປະເພດອ່ອນ ແລະ ເສຍທາດ.

**ຄ. ເງື່ອນໄຂໜ່ວຍພັກທີ່ຈະໄດ້ຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.**

1). ໜ່ວຍພັກທີ່ປະຕິບັດຕາມແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນທຸກຂັ້ນຕອນ ແລະ ທັນຕາມກຳນົດເວລາ ທີ່ກຳນົດໄວ້;

2). ໜ່ວຍພັກຈັດຢູ່ໃນປະເພດແຂງ ແຕ່ຕ້ອງມີສະມາຊິກພັກຈັດ ຢູ່ໃນປະເພດແຂງກວມ 100%.

3). ໜ່ວຍພັກນຳພາດຳເນີນຊີວິດພັກ ແລະ ສີ່ງເງິນສະຕິພັກໃຫ້ຄະນະພັກຂັ້ນເທິງເປັນປົກກະຕິ ແລະ ສອດຄ່ອງຕາມກົດລະບຽບພັກ;

4). ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ບັນດາອົງການຈັດຕັ້ງມະຫາຊົນ ທີ່ຂຶ້ນກັບໜ່ວຍພັກຕ້ອງ

ໄດ້ຮັບຮອງຕາມມາດຕະຖານ ແລະ ເງື່ອນໄຂຂໍ້ແຂ່ງຂັນຂອງແຕ່ລະອົງການ ຄື: ໜ່ວຍຊາວໜຸ່ມ 4 ບຸກ, ໜ່ວຍແມ່ຍິງ 3 ດີ, ໜ່ວຍກໍາມະບານ 5 ເປັນເຈົ້າ, ສະຫະພັນນັກຮົບເກົ່າ 3 ດີ 6 ຮັກສາ.

## IV. ຄະນະຮັບຜິດຊອບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

ວຽກງານກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແມ່ນຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນ ໂດຍສະເພາະ ແມ່ນຄະນະປະຈໍາພັກ, ເລຂາ, ຮອງເລຂາຄະນະພັກເປັນຜູ້ຊີ້ນໍາໂດຍກົງ; ເພື່ອເປັນເສນາທິການ ໃຫ້ແກ່ຄະນະປະຈໍາພັກແຕ່ລະຂັ້ນ ໃນການອໍານວຍ, ຄວບຄຸມ, ແນະນໍາ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນທົ່ວອົງຄະນະພັກຕົນ ທັງເປັນຜູ້ຄົ້ນຄວ້າ, ເລືອກເຟັ້ນສະມາຊິກພັກ, ໜ່ວຍພັກ ໃຫ້ຄະນະປະຈໍາພັກພິຈາລະນາຮັບຮອງ ແລະ ຮັບປະກັນຄຸນນະພາບ ຈຶ່ງຈໍາເປັນຕ້ອງມີການແຕ່ງຕັ້ງຄະນະຮັບຜິດຊອບ ແຕ່ລະຂັ້ນ.

**ກ. ການແຕ່ງຕັ້ງຄະນະຮັບຜິດຊອບ ແຕ່ລະຂັ້ນ.**

**1. ຄະນະຮັບຜິດຊອບຂັ້ນກະຊວງ-ອົງການ ປະກອບມີ:**

1). ຮອງເລຂາຄະນະພັກ — ເປັນຫົວໜ້າ

2). ຫົວໜ້າກົມຈັດຕັ້ງ-ພະນັກງານ — ເປັນຮອງ

3). ຫົວໜ້າກົມກວດກາ ຫຼື ຮອງປະທານກວດກາພັກ (ບ່ອນບໍ່ມີກົມກວດກາ) — ເປັນຄະນະ

4). ຕາງໜ້າຂອງແຕ່ລະອົງການຈັດຕັ້ງມະຫາຊົນ — ເປັນຄະນະ

5). ວິຊາການກົມຈັດຕັ້ງ-ພະນັກງານ, ກົມກວດກາ, ພະແນກກວດກາ (ບ່ອນບໍ່ມີກົມກວດກາ) ຈໍານວນໜຶ່ງ — ເປັນຄະນະ

**2.** ສໍາລັບຄະນະບໍລິຫານງານພັກ ສະພາແຫ່ງຊາດ, ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບການແຕ່ງຕັ້ງຄະນະຮັບຜິດຊອບ ແມ່ນໃຫ້ອີງໃສ່ຈຸດພິເສດສະເພາະຂອງອົງຄະນະພັກ ດັ່ງກ່າວ.

**3. ຄະນະຮັບຜິດຊອບຂັ້ນແຂວງ, ນະຄອນຫຼວງ, ເມືອງ-ນະຄອນ ແລະ ທຽບເທົ່າ ປະກອບມີ:**

1). ຮອງເລຂາຄະນະພັກ (ຜູ້ຊີ້ນໍາວຽກການເມືອງແນວຄິດ, ວຽກງານພັກ-ພະນັກງານ, ວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ອົງການຈັດຕັ້ງມະຫາຊົນ) — ເປັນຫົວໜ້າ

2). ຫົວໜ້າຄະນະຈັດຕັ້ງ — ເປັນຮອງ

3). ປະທານກວດກາພັກ — ເປັນຄະນະ

4). ຫົວໜ້າ ຫຼື ຮອງຫົວໜ້າໂຄສະນາອົບຮົມ — ເປັນຄະນະ

5). ວິຊາການຄະນະຈັດຕັ້ງ ແລະ ຄະນະກວດກາພັກ ຈໍານວນໜຶ່ງ — ເປັນຄະນະ

**4. ຄະນະຮັບຜິດຊອບຂັ້ນໜ່ວຍພັກ ປະກອບມີ:**

ຄະນະຮັບຜິດຊອບຂອງໜ່ວຍພັກ ມີໜ້າທີ່ເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດ ບັນດາມະຕິກໍາຂອງຄະນະພັກຂັ້ນເທິງ, ສ້າງແຜນການເຄື່ອນໄຫວຮອບດ້ານ, ເກັບກໍາຂໍ້ມູນ, ກໍາສະພາບການເຄື່ອນໄຫວຂອງສະມາຊິກພັກ, ນໍາພາ, ສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເພື່ອໃຫ້ຄະນະໜ່ວຍພັກຄົ້ນຄວ້າເອກະພາບໃຫ້ຄະແນນແຕ່ລະດ້ານຕາມມາດຕະຖານທີ່ກໍານົດໃນຄໍາແນະນໍາສະບັບນີ້.

1). ເລຂາໜ່ວຍພັກ — ເປັນຫົວໜ້າ

2). ຮອງເລຂາໜ່ວຍພັກ — ເປັນຮອງ

3). ກໍາມະການໜ່ວຍພັກ — ເປັນກໍາມະການ

4). ກອງເລຂາ ປະກອບມີ ສະມາຊິກພັກລິເລີ່ມຈໍານວນໜຶ່ງ ເພື່ອເປັນເສນາທິການຊ່ວຍຄະນະໜ່ວຍພັກໃນການກະກຽມເອກະສານ ເພື່ອຊ່ວຍວຽກໃຫ້ຄະນະຮັບຜິດຊອບ ແລະ ວຽກງານທີ່ກ່ຽວຂ້ອງ ພ້ອມທັງປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະຮັບຜິດຊອບ.

ຂ. ໜ້າທີ່ ຂອງຄະນະຮັບຜິດຊອບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງກະຊວງ-ອົງການ, ແຂວງ, ນະຄອນຫຼວງ, ເມືອງ-ນະຄອນ ແລະ ທຽບເທົ່າ ມີດັ່ງນີ້:

1). ເປັນເຈົ້າການຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍບັນດາມະຕິກຳຂອງຄະນະພັກຂັ້ນເທິງ, ສ້າງແຜນການເຄື່ອນໄຫວຮອບດ້ານ, ຊຸກຍູ້, ຕິດຕາມ, ກວດກາ, ເກັບກຳຂໍ້ມູນ, ກຳສະພາບການເຄື່ອນໄຫວຂອງບັນດາໜ່ວຍພັກ ແລະ ສະມາຊິກພັກ, ເຂົ້າຮ່ວມຕິດຕາມກອງປະຊຸມສະຫຼຸບຕີລາຄາປະເມີນໜ່ວຍພັກ; ເປີດກອງປະຊຸມຄົ້ນຄວ້າ, ເລືອກເຟັ້ນບັນດາໜ່ວຍພັກ ທີ່ສະເໜີຂໍອະນຸມັດຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ແລະ ແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ ທີ່ຂຶ້ນກັບອົງຄະນະພັກຂັ້ນຕົນ ເພື່ອນຳສະເໜີ ຄະນະປະຈຳພັກຂັ້ນຕົນ ພິຈາລະນາຮັບຮອງ; ຄະນະຮັບຜິດຊອບສະຫຼຸບສັງລວມ, ປະກອບເອກະສານຄົບຖ້ວນສົ່ງໃຫ້ຄະນະພັກຂັ້ນເທິງຖັດຕົນ; ສະເພາະຄະນະຮັບຜິດຊອບຂອງແຂວງ, ນະຄອນຫຼວງ, ກະຊວງ-ອົງການ ເປັນຜູ້ສະຫຼຸບສັງລວມ ແລະ ປະກອບຂໍ້ມູນເຂົ້າໃນໃບຢັ້ງຢືນ ແລ້ວສົ່ງໃຫ້ຄະນະຈັດຕັ້ງສູນກາງພັກ ພິຈາລະນາຢັ້ງຢືນ ແລະ ປະທັບຕາດິບ.

2). ພາຍຫຼັງໄດ້ຮັບການພິຈາລະນາຢັ້ງຢືນ ແລະ ປະທັບຕາດິບ ຈາກຄະນະຈັດຕັ້ງສູນກາງພັກ ໃຫ້ຄະນະພັກແຕ່ລະຂັ້ນ ຈັດຕັ້ງພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ໃຫ້ບັນດາໜ່ວຍພັກ ທີ່ຂຶ້ນກັບອົງຄະນະພັກຂັ້ນຕົນ;

3). ພາຍຫຼັງຈັດຕັ້ງພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ສຳເລັດ ຕ້ອງຈັດຕັ້ງສະຫຼຸບ-ຖອດຖອນບົດຮຽນກ່ຽວກັບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນທົ່ວອົງຄະນະພັກຕົນ ບໍ່ໃຫ້ເກີນ 15 ວັນ ແລະ ປະກາດການແຕ່ງຕັ້ງຄະນະຮັບຜິດຊອບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຊຸດໃໝ່ (ຖ້າມີການປ່ຽນແປງ).

## V. ບາດກ້າວ, ຂັ້ນຕອນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

ການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕ້ອງປະຕິບັດຕາມ 5 ບາດກ້າວ, 3 ຂັ້ນຕອນ ແລະ 2 ວາລະ ດັ່ງນີ້:

**ບາດກ້າວທີ 1: ການສ້າງແຜນການ.**

1). ບັນດາໜ່ວຍພັກ ຕ້ອງໄດ້ສ້າງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ໂດຍກຳນົດແຈ້ງຈຸດປະສົງ, ຄາດໝາຍສູ້ຊົນແຕ່ລະດ້ານ ຕາມ 5 ມາດຕະຖານ ຂອງການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ;

2). ແຜນການ ຕ້ອງໄດ້ຜ່ານໃນກອງປະຊຸມໜ່ວຍພັກ ເພື່ອໃຫ້ສະມາຊິກພັກພາຍໃນໜ່ວຍ ປະກອບຄຳຄິດເຫັນ ແລະ ລົງປະຊາມະຕິຮັບຮອງເປັນເອກະພາບ; ແຜນການດັ່ງກ່າວ ຕ້ອງໄດ້ສົ່ງໃຫ້ຄະນະພັກຂັ້ນເທິງຖັດຕົນ ເພື່ອພິຈາລະນາຮັບຮອງ ບໍ່ໃຫ້ກາຍເດືອນ ທັນວາ ຂອງທຸກປີ.

**ບາດກ້າວທີ 2: ການຈັດຕັ້ງປະຕິບັດແຜນການ.**

1). ແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຂອງໜ່ວຍພັກ ພາຍຫຼັງໄດ້ຮັບຮອງ ຈາກຄະນະພັກຂັ້ນເທິງແລ້ວ ຄະນະໜ່ວຍພັກຕ້ອງເປັນເຈົ້າການນຳພາຈັດຕັ້ງເຜີຍແຜ່, ເຊື່ອມຊຶມໃຫ້ສະມາຊິກພັກ, ອົງການປົກຄອງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງໜ່ວຍພັກຮັບຮູ້, ເຂົ້າໃຈ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດ;

2). ຫັນເອົາແຜນການ ກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ມາເປັນແຜນການ ປະຈຳເດືອນ, ມີການແບ່ງງານ, ແບ່ງຄວາມຮັບຜິດຊອບໃຫ້ຄະນະໜ່ວຍພັກ ແລະ ສະມາຊິກພັກ ຈັດຕັ້ງປະຕິບັດໃຫ້ເກີດຜົນຕົວຈິງ ໂດຍຖືເອົາການດຳເນີນຊີວິດໜ່ວຍພັກ ປະຈຳເດືອນ ເປັນການກວດກາ, ສະຫຼຸບຕີລາຄາ, ຖອດຖອນບົດຮຽນໃນການນຳພາຈັດຕັ້ງປະຕິບັດແຜນການ ແລະ ຕີລາຄາຄວາມຮັບຜິດຊອບຂອງຄະນະໜ່ວຍພັກ ແລະ ສະມາຊິກພັກ;

3). ການຈັດຕັ້ງປະຕິບັດແຜນການ ຂອງໜ່ວຍພັກ ແມ່ນໃຫ້ເລີ່ມແຕ່ເດືອນ ມັງກອນ ຂອງທຸກໆປີ.

ບາດກ້າວທີ 3: ສະຫຼຸບການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

ໜ່ວຍພັກຕ້ອງເປັນເຈົ້າການສະຫຼຸບການຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ ພາຍໃນເດືອນ ຕຸລາ ຂອງທຸກໆປີ ຕາມ 3 ຂັ້ນຕອນ ດັ່ງນີ້:

❖ **ຂັ້ນຕອນທີ 1: ການກະກຽມ.**

1. ຄະນະຮັບຜິດຊອບ ຂອງໜ່ວຍພັກສ້າງແຜນການເຄື່ອນໄຫວຕີລາຄາປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ ຂອງຕົນ;

2. ກະກຽມເນື້ອໃນ ແລະ ເອກະສານປິ່ນອ້ອມ:

1). (ຮ່າງ) ໃບສໍາຫຼວດສະມາຊິກພັກ;

- ສໍາລັບແຈກຢາຍໃຫ້ສະມາຊິກພັກ, ກ່ອນໜ່ວຍພັກຈະປະເມີນ

2). (ຮ່າງ) ຕີລາຄາໃຫ້ຄະແນນ ແລະ ແບ່ງປະເພດສະມາຊິກພັກ;

- ສໍາລັບແຈກຢາຍໃຫ້ບຸກຄົນສະມາຊິກພັກ ຈະຕ້ອງໄດ້ຕີລາຄາໃຫ້ຄະແນນ ແລະ ຈັດແບ່ງປະເພດຕົນເອງ

3). (ຮ່າງ) ທາບທາມຄໍາເຫັນສິ່ງຂ່າວຕໍ່ບຸກຄົນສະມາຊິກພັກ (ແບບປິດລັບ);

- ສໍາລັບແຈກຢາຍໃຫ້ສະມາຊິກພັກພາຍໃນໜ່ວຍ ຂຽນຄໍາເຫັນສິ່ງຂ່າວເຊິ່ງກັນ ແລະ ກັນ ແລ້ວສົ່ງໃຫ້ຄະນະຮັບຜິດຊອບຂັ້ນໜ່ວຍສັງລວມເປັນແຕ່ລະສະຫາຍ ແລ້ວສົ່ງໃຫ້ບຸກຄົນສະມາຊິກພັກຄືນ ເພື່ອມີຄໍາເຫັນຊີ້ແຈງເວລາຜ່ານບົດສໍາຫຼວດຕົນເອງ

4). (ຮ່າງ) ຕີລາຄາໃຫ້ຄະແນນ ແລະ ແບ່ງປະເພດສະມາຊິກພັກ (ແບບປິດລັບ);

- ສໍາລັບແຈກຢາຍໃຫ້ສະມາຊິກພັກພາຍໃນໜ່ວຍ ໃຫ້ຄະແນນເຊິ່ງກັນ ແລະ ກັນ ແຕ່ລະດ້ານ ພ້ອມທັງສັງລວມຄະແນນ, ສະເລ່ຍ ແລະ ຈັດປະເພດສະມາຊິກພັກແຕ່ລະສະຫາຍ ແລ້ວສົ່ງໃຫ້ຄະນະຮັບຜິດຊອບຂັ້ນໜ່ວຍສັງລວມ ເພື່ອລາຍງານຄະນະໜ່ວຍພັກ

5). (ຮ່າງ) ທາບທາມຄໍາເຫັນສິ່ງຂ່າວຂອງສະມາຊິກພັກຕໍ່ການນໍາພາລວມ ຂອງໜ່ວຍພັກ (ແບບປິດລັບ);

- ສໍາລັບແຈກຢາຍໃຫ້ສະມາຊິກພັກພາຍໃນໜ່ວຍ ຂຽນຄໍາເຫັນສິ່ງຂ່າວ ຕໍ່ການນໍາພາ-ຊີ້ນໍາຂອງໜ່ວຍພັກແຕ່ລະດ້ານ ແລ້ວສົ່ງໃຫ້ຄະນະຮັບຜິດຊອບຂັ້ນໜ່ວຍສັງລວມ ແລ້ວສົ່ງໃຫ້ສະຫາຍເລຂາໜ່ວຍພັກ ເພື່ອມີຄໍາເຫັນຊີ້ແຈງເວລາຜ່ານບົດສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ

6). (ຮ່າງ) ສັງລວມຄະແນນ ແລະ ແບ່ງປະເພດສະມາຊິກພັກ;

- ສໍາລັບຄະນະຮັບຜິດຊອບຂັ້ນໜ່ວຍສັງລວມ ເພື່ອລາຍງານສະຫາຍເລຂາໜ່ວຍພັກ

7). (ຮ່າງ) ສັງລວມຄະແນນ ແລະ ແບ່ງປະເພດໜ່ວຍພັກ;

- ສໍາລັບຄະນະຮັບຜິດຊອບຂັ້ນໜ່ວຍສັງລວມຄະແນນ ຕາມ 5 ເນື້ອໃນ ທີ່ຄະນະໜ່ວຍພັກໄດ້ເອກະພາບກັນ. ຫຼັງຈາກນັ້ນ, ຄະນະໜ່ວຍພັກເປີດກອງປະຊຸມປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລ້ວນໍາມາຜ່ານໃນກອງປະຊຸມ ເພື່ອໃຫ້ບັນດາສະຫາຍສະມາຊິກພັກປະຊາມະຕິຮັບຮອງເອົາ; ຄະນະຮັບຜິດຊອບຂັ້ນໜ່ວຍສັງລວມຄືນຄະແນນ ຕາມທີ່ກອງປະຊຸມໄດ້ປະຊາມະຕິຮັບຮອງ

8). ໂຄງຮ່າງ ບົດສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ ແລະ ທິດທາງແຜນການ ປະຈໍາປີ (ສໍາລັບໜ່ວຍພັກສໍານັກງານ-ອົງການ);

9). ໂຄງຮ່າງ ບົດສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ ແລະ ທິດທາງແຜນການ ປະຈໍາປີ (ສໍາລັບໜ່ວຍພັກບ້ານ);

10). (ຮ່າງ) ມະຕິຕົກລົງ ວ່າດ້ວຍການຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈໍາປີ;

11). (ຮ່າງ) ມະຕິຕົກລົງ ວ່າດ້ວຍການຮັບຮອງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ

12). (ຮ່າງ) ບົດລາຍງານການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນຂອງອົງຄະນະພັກ ປະຈຳປີ;

13). ພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

3. ຈັດຕັ້ງທາບທາມຄຳເຫັນຕໍ່ການນຳພາລວມຂອງໜ່ວຍພັກ ແລະ ບຸກຄົນສະມາຊິກພັກ.

ໜ່ວຍພັກ ຕ້ອງຮຽກໂຮມສະມາຊິກພັກໃນໜ່ວຍຈັດຕັ້ງທາບທາມຄຳເຫັນຕໍ່ການນຳພາລວມ ຂອງໜ່ວຍພັກ ແລະ ສະມາຊິກພັກ ກ່ອນດຳເນີນກອງປະຊຸມຕີລາຄາປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ພາຍໃນ 1-3 ວັນ ເຊິ່ງໃນວາລະການທາບທາມ ໃຫ້ປະຕິບັດ ດັ່ງນີ້:

- ສະເໜີຈຸດປະສົງ, ຈັດຕັ້ງທາບທາມຄຳເຫັນຕໍ່ການນຳພາລວມຂອງໜ່ວຍພັກ ແລະ ບຸກຄົນສະມາຊິກພັກ;

- ແຈກຢາຍຮ່າງທາບທາມຄຳເຫັນສິ່ງຂ່າວຕໍ່ການນຳພາລວມຂອງໜ່ວຍພັກ ແລະ ບຸກຄົນສະມາຊິກພັກ;

- ດຳເນີນການທາບທາມ (ໃຫ້ສະມາຊິກພັກຂຽນຄຳເຫັນ, ຄຳສະເໜີ, ຄຳຕິຊົມປິດລັບຕໍ່ການນຳພາຂອງໜ່ວຍພັກ ແລະ ບຸກຄົນສະມາຊິກພັກ);

- ຄະນະຮັບຜິດຊອບຂັ້ນໜ່ວຍພັກ ສັງລວມ ແລະ ລາຍງານຜົນການທາບທາມຕໍ່ຄະນະໜ່ວຍພັກ ເພື່ອເປັນຂໍ້ມູນໃຫ້ແກ່ການປະເມີນໜ່ວຍພັກ ແລະ ບຸກຄົນສະມາຊິກພັກ.

❖ **ຂັ້ນຕອນທີ 2: ການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.**

ການດຳເນີນຕີລາຄາປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແບ່ງອອກເປັນ 2 ວາລະ ຄື:

- **ວາລະ 1: ດຳເນີນການປະເມີນສະມາຊິກພັກ.**

1). ແຈກຢາຍຮ່າງຕີລາຄາໃຫ້ຄະແນນ ແລະ ແບ່ງປະເພດສະມາຊິກພັກ (ແບບປິດລັບ), ແນະນຳວິທີໃຫ້ຄະແນນຕົນເອງ ແລະ ໃຫ້ຄະແນນເຊິ່ງກັນ ແລະ ກັນ ໃຫ້ສະມາຊິກພັກໃນໜ່ວຍຮັບຮູ້, ເຂົ້າໃຈ;

2). ສະມາຊິກພັກຜ່ານໃບສຳຫຼວດ, ໃຫ້ຄະແນນ ແລະ ຈັດປະເພດຕົນເອງ; ຜ່ານຄຳເຫັນສິ່ງຂ່າວຂອງສະມາຊິກພັກໃນໜ່ວຍ ທີ່ໄດ້ມີຄຳເຫັນປິດລັບມາແລ້ວ ພ້ອມທັງອະທິບາຍຊີ້ແຈງ (ຖ້າມີ);

3). ສະມາຊິກພັກໃນໜ່ວຍປະກອບຄຳເຫັນ;

4). ສະມາຊິກພັກໃນໜ່ວຍໃຫ້ຄະແນນປິດລັບ ຕໍ່ບຸກຄົນສະມາຊິກພັກ;

5). ຄະນະຮັບຜິດຊອບຂັ້ນໜ່ວຍພັກສະຫຼຸບ, ສັງລວມຄະແນນປິດລັບ ລາຍງານຜົນຕໍ່ຄະນະໜ່ວຍພັກ.

- **ວາລະ 2: ດຳເນີນການປະເມີນໜ່ວຍພັກ.**

1). ຜ່ານຮ່າງບົດສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ແລະ ທິດທາງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ (ສະມາຊິກພັກໃນໜ່ວຍພັກປະກອບຄຳເຫັນ);

2). ເລຂາໜ່ວຍພັກນຳພາສະມາຊິກພັກ ລົງປະຊາມະຕິ ໃຫ້ຄະແນນແຕ່ລະດ້ານ (ໂດຍກົງ) ແລະ ຈັດປະເພດໜ່ວຍພັກ ໃນການເຄື່ອນໄຫວກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ;

3). ເລຂາໜ່ວຍພັກ ນຳພາສະມາຊິກພັກ ລົງປະຊາມະຕິຮັບຮອງເອົາແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ;

4). ເລຂາໜ່ວຍພັກ ມີຄຳເຫັນສະຫຼຸບ ແລະ ກ່າວປິດກອງປະຊຸມ.

❖ **ຂັ້ນຕອນທີ 3: ນຳສະເໜີຄະນະພັກຂັ້ນເທິງຖັດຕົນ.**

ຄະນະໜ່ວຍພັກ ເປີດກອງປະຊຸມຄົ້ນຄ້ວາ, ປັບປຸງເນື້ອໃນເອກະສານຕ່າງໆ ເພື່ອລາຍງານຜົນສຳເລັດການປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕໍ່ຄະນະພັກຂັ້ນເທິງຖັດຕົນ, ກອງປະຊຸມດັ່ງກ່າວມີເນື້ອໃນ ດັ່ງນີ້:

1). ປັບປຸງຮ່າງບົດສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ແລະ ແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ ໃຫ້ຄົບຖ້ວນສົມບູນ;

2). ຄົ້ນຄວ້າພິຈາລະນາຜົນການຕີລາຄາໃຫ້ຄະແນນ, ແບ່ງປະເພດຕົນເອງ ແລະ ການໃຫ້ຄະແນນເຊິ່ງກັນ ແລະ ກັນ (ແບບປິດລັບ) ຂອງສະມາຊິກພັກ ບົນພື້ນຖານຄວາມຖືກຕ້ອງ, ສອດຄ່ອງກັບຜົນງານຕົວຈິງຂອງແຕ່ລະສະຫາຍ;

3). ລາຍງານຜົນສຳເລັດການຕີລາຄາປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ແລ້ວນຳສະເໜີຄະນະພັກຂັ້ນເທິງຖັດຕົນພິຈາລະນາຮັບຮອງ ຕາມຜົນງານຕົວຈິງຂອງໜ່ວຍພັກທີ່ບັນລຸໄດ້ ເຊິ່ງການສະເໜີຕໍ່ຄະນະພັກຂັ້ນເທິງຖັດຕົນ ປະກອບມີເອກະສານ ຄື: ①ໜັງສືສະເໜີ, ②ບົດສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ, ③ແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ, ④ສັງລວມຜົນການຕີລາຄາໃຫ້ຄະແນນ ແລະ ແບ່ງປະເພດສະມາຊິກພັກ, ໜ່ວຍພັກ ແລະ ⑤ບົດລາຍງານຜົນສຳເລັດການຕີລາຄາປະເມີນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.

**ມາດຕາ 4: ການຄົ້ນຄວ້າພິຈາລະນາ ຂອງຄະນະຮັບຜິດຊອບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.**

1). ສັງລວມລາຍຊື່ບັນດາໜ່ວຍພັກ ໃນທີ່ອີງຄະນະພັກຕົນ ທີ່ມີເງື່ອນໄຂຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ແລະ ແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ ພ້ອມທັງກວດກາຄືນເອກະສານທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງ, ຄົບຖ້ວນ;

2). ເປີດກອງປະຊຸມຄົ້ນຄວ້າ, ເລືອກເຟັ້ນບັນດາໜ່ວຍພັກ ທີ່ສະເໜີຂໍອະນຸມັດຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ແລະ ແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ ຂອງບັນດາໜ່ວຍພັກໃນທີ່ອີງຄະນະພັກຕົນ ເພື່ອນຳສະເໜີຄະນະປະຈຳພັກ, ບ່ອນບໍ່ມີຄະນະປະຈຳພັກ ແມ່ນສະຫາຍເລຂາ, ຮອງເລຂາຄະນະພັກ ພິຈາລະນາຮັບຮອງ;

3). ຄະນະຮັບຜິດຊອບ ຂອງເມືອງ-ນະຄອນ ແລະ ທຽບເທົ່າ ຮັບຜິດຊອບສັງລວມ ແລະ ປະກອບເອກະສານຄົບຊຸດລາຍງານຕໍ່ຄະນະຮັບຜິດຊອບຂັ້ນເທິງຖັດຕົນ ປະກອບມີເອກະສານ ຄື: ①ໜັງສືສະເໜີ, ②ມະຕິຕົກລົງວ່າດ້ວຍການຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ, ③ມະຕິຕົກລົງຮັບຮອງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ, ④ສັງລວມຜົນການຕີລາຄາໃຫ້ຄະແນນ ແລະ ແບ່ງປະເພດສະມາຊິກພັກ, ໜ່ວຍພັກ, ⑤ບົດລາຍງານການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນທີ່ອີງຄະນະພັກຕົນ;

4). ຄະນະຮັບຜິດຊອບ ຂອງກະຊວງ-ອົງການ, ແຂວງ, ນະຄອນຫຼວງ ຮັບຜິດຊອບສັງລວມ ແລະ ປະກອບເອກະສານທີ່ກ່ຽວຂ້ອງ ຄື: ①ໜັງສືສະເໜີ, ②ມະຕິຕົກລົງ ວ່າດ້ວຍການຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ, ③ມະຕິຕົກລົງ ວ່າດ້ວຍການຮັບຮອງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ, ④ບົດລາຍງານການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃນທີ່ອີງຄະນະພັກຕົນ, ⑤ໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ທີ່ປະກອບຂໍ້ມູນຄົບຖ້ວນ ສະເໜີຕໍ່ຄະນະຈັດຕັ້ງສູນກາງພັກ ເພື່ອຢັ້ງຢືນປະທັບຕາດິບ ບໍ່ໃຫ້ກາຍເດືອນ ທັນວາ ຂອງທຸກໆປີ;

5). ພາຍຫຼັງໄດ້ຮັບການຢັ້ງຢືນປະທັບຕາດິບ ຈາກຄະນະຈັດຕັ້ງສູນກາງພັກ ຄະນະປະຈຳພັກ ກະຊວງ-ອົງການ, ແຂວງ, ນະຄອນຫຼວງ ຈັດຕັ້ງພິທີມອບ-ຮັບໃບຢັ້ງຢືນ ຕາມເວລາທີ່ເໝາະສົມ.

**ມາດຕາ 5: ການຈັດຕັ້ງພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ.**

1). ອົງຄະນະພັກກະຊວງ-ອົງການ, ແຂວງ, ນະຄອນຫຼວງ, ເມືອງ-ນະຄອນ ແລະ ທຽບເທົ່າ ຈັດຕັ້ງພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ໃຫ້ບັນດາໜ່ວຍພັກທີ່ຂຶ້ນກັບອົງຄະນະພັກຂັ້ນຕົນ;

2). ການຈັດຕັ້ງພິທີມອບ-ຮັບໃບຢັ້ງຢືນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແມ່ນປະຕິບັດ ດັ່ງນີ້:

- ຜ່ານບົດສະຫຼຸບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ ແລະ ທິດທາງແຜນການ ປີຕໍ່ໄປທີ່ອົງຄະນະພັກ ຂັ້ນຕົນ;

- ຜ່ານມະຕິຕົກລົງ ຂອງຄະນະປະຈຳພັກ ວ່າດ້ວຍການຮັບຮອງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປະຈຳປີ;

- ມອບ-ຮັບໃບຢັ້ງຢືນໃຫ້ບັນດາໜ່ວຍພັກ ທີ່ໄດ້ຮັບຮອງເປັນໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ;

- ຜ່ານມະຕິຕົກລົງ ວ່າດ້ວຍການຮັບຮອງແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ ຂອງບັນດາໜ່ວຍພັກ;

- ບັນດາໜ່ວຍພັກຂຶ້ນຈັບມືແຂ່ງຂັນຈັດຕັ້ງປະຕິບັດແຜນການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ປີຕໍ່ໄປ;

- ຄະນະພັກຂັ້ນເທິງ ມີຄໍາເຫັນໂອ້ລົມ;

- ຕາງໜ້າຄະນະພັກ, ໜ່ວຍພັກ ທີ່ໄດ້ຮັບການມອບໝາຍ ຂຶ້ນຮັບຄໍາໂອວາດ ຈາກຄະນະພັກຂັ້ນເທິງ.

## VI. ມາດຕະການຈັດຕັ້ງປະຕິບັດ.

1. ຄະນະພັກ ແຕ່ລະຂັ້ນ ຕ້ອງເຊື່ອມຊຶມ, ກໍາແໜ້ນ ຄໍາແນະນໍາສະບັບນີ້ ໃຫ້ເລິກເຊິ່ງ ແລະ ຜັນຂະຫຍາຍ ເປັນນິຕິກໍາຂອງຕົນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີຄວາມເປັນເອກະພາບ;

2. ຄະນະຮັບຜິດຊອບການກໍ່ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແຕ່ລະຂັ້ນ ຕ້ອງເປັນເຈົ້າການ ເຜີຍແຜ່, ແນະນໍາ, ຊຸກຍູ້, ຕິດຕາມ, ກວດກາຮາກຖານພັກ ແລະ ສະມາຊິກພັກ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ໃນການຈັດຕັ້ງປະຕິບັດໃຫ້ເປັນປົກກະຕິ;

3. ຜ່ານການຈັດຕັ້ງປະຕິບັດຕົວຈິງຖ້າພົບຄວາມຫຍຸ້ງຍາກ ໃຫ້ລາຍງານຕໍ່ຄະນະພັກຂັ້ນເທິງ ເພື່ອມີທິດຊີ້ນໍາ ໃຫ້ທັນເວລາ;

4. ຄໍາແນະນໍາສະບັບນີ້ປ່ຽນແທນ ຄໍາແນະນໍາ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 291/ຄຈສພ, ລົງວັນທີ 26 ເມສາ 2018 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າຄະນະຈັດຕັ້ງສູນກາງພັກ**

ຄະນະຈັດຕັ້ງສູນກາງພັກ

**ນ.ສີໃສ ລືເດດມູນສອນ**